ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກອງເລຂາຄະນະກໍາມະການ
ອໍານວຍຄວາມສະດວກທາງດ້ານການຄ້າ

0729----
ເລກທີ .................. /ຄອຄສ
ນະຄອນຫຼວງວຽງຈັນ, ວັນທີ...10.....ສິງຫາ 2020

# ຂໍ້ຕົກລົງ

## ວ່າດ້ວຍ ການແຕ່ງຕັ້ງຄະນະຮັບຜິດຊອບສຶກສາເວລາໃນການກວດປ່ອຍສິນຄ້າ (Time Release Study) ປະຈໍາປີ 2020

- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກອງເລຂາຄະນະກໍາມະການອໍານວຍຄວາມສະດວກທາງດ້ານການຄ້າ ສະບັບເລກທີ 001/ຄອຄສ, ລົງວັນທີ 26 ທັນວາ 2018.
- ອີງຕາມແຜນວຽກລະອຽດຂອງ Component B1 ແລະ B2.3 ພາຍໃຕ້ໂຄງການສົ່ງເສີມຄວາມສາມາດໃນການແຂ່ງຂັນ ແລະ ການຄ້າ ຂອງ ສປປ ລາວ ທີ່ໄດ້ຮັບການຮັບຮອງຈາກຄະນະຊີ້ນໍາແຜນງານໂຄງການ ແລະ ທະນາຄານໂລກ ລົງວັນທີ 12 ທັນວາ 2019.

**ລັດຖະມົນຕີ ກະຊວງ ອຸດສາຫະກໍາ ແລະ ການຄ້າ ໃນນາມຫົວໜ້າກອງເລຂາຄະນະກໍາມະການຊີ້ນໍາລວມວຽກງານອໍານວຍຄວາມສະດວກທາງດ້ານການຄ້າ ອອກຂໍ້ຕົກລົງ:**

**ມາດຕາ 1.** ແຕ່ງຕັ້ງຄະນະຊີ້ນໍາລວມໃນການສຶກສາເວລາກວດປ່ອຍສິນຄ້າ (TRS) 2020 ດັ່ງນີ້:

| | | |
|---|---|---|
| 1. ທ່ານ ສຸລິຍົນ ພິລາວົງ | ຫົວໜ້າກົມການນໍາເຂົ້າ ແລະ ສົ່ງອອກ | ເປັນຫົວໜ້າຄະນະ |
| 2. ທ່ານ ຄໍາມົດ ໄຊອາສາ | ຮອງຫົວໜ້າກົມພາສີ | ເປັນຮອງຄະນະ |
| 3. ທ່ານ ປອ ສຸລະພອນ ອິນທະວົງ | ຮອງຫົວໜ້າກົມປູກຝັງ | ຄະນະ |
| 4. ທ່ານ ສີທອງ ພິພັກຂະວົງ | ຮອງຫົວໜ້າກົມ ລ້ຽງສັດ ແລະ ການປະມົງ | ຄະນະ |
| 5. ທ່ານ ດຣ ນ. ວຽງໄຊ ວັນສີລາລົມ | ຮອງຫົວໜ້າກົມອາຫານ ແລະ ຢາ | ຄະນະ |
| 6. ທ່ານ ທ່ານ ນິສິດ ຄໍາມູນເຮືອງ | ຮອງຫົວໜ້າກົມມາດຕະຖານ ແລະ ວັດແທກ | ຄະນະ |
| 7. ທ່ານ ທ່ານ ກົງຄໍາ ຈັນທະວິຈິດ | ຮອງຫົວໜ້າກົມຄຸ້ມຄອງບໍ່ແຮ່ | ຄະນະ |
| 8. ທ່ານ ວິໄລພັນ ໄຊຍະວົງ | ຮອງຫົວໜ້າກົມຂົນສົ່ງ | ຄະນະ |
| 9. ທ່ານ ດາວວອນ ພະຈັນທະວົງ | ຮອງປະທານ ສຄອຊ | ຄະນະ |
| 10. ທ່ານ ວິຈິດ ສະເດັດຕັນ ຮອງປະທານສະມາຄົມຜູ້ຈັດສົ່ງສິນຄ້າລະຫວ່າງປະເທດ | | ຄະນະ |

- ຄະນະຊີ້ນໍາມີໜ້າທີ່ດັ່ງນີ້:
  - ຊີ້ນໍາລວມໃນການສ້າງແຜນສຶກສາເວລາກວດປ່ອຍສິນຄ້າ (TRS) 2020;
  - ຈັດສັນແບ່ງຄວາມຮັບຜິດຊອບໃຫ້ແຕ່ລະພາກສ່ວນ;
  - ຕິດຕາມການດໍາເນີນການສຶກສາ (TRS) 2020;
  - ກວດກາ ແລະ ຮັບຮອງເອົາບົດລາຍງານ (TRS) 2020.

**ມາດຕາ 2.** ແຕ່ງຕັ້ງຄະນະວິຊາການໃນການຮັບຜິດຊອບສຶກສາເວລາກວດປ່ອຍສິນຄ້າ (TRS) 2020 ດັ່ງນີ້:

| | | |
|---|---|---|
| 1. ທ່ານ ມົວວິໄຊ ປາລີ | ຮອງຫົວໜ້າກົມການນໍາເຂົ້າ ແລະ ສົ່ງອອກ | ເປັນຫົວໜ້າຄະນະ |
| 2. ທ່ານ ສົມປະສົງ ອໍາແພງໄພ, | ຫົວໜ້າດ່ານສາກົນສະໜາມບິນວັດໄຕ ກົມພາສີ | ເປັນ ຊ່ຽວຊານ ແລະ ຮອງຫົວໜ້າຄະນະ |

3. ທ່ານ ສອນມາລາ ນວນທະສິງ ຮອງຫົວໜ້າພະແນກ ກົມ ຂອ ເປັນຮອງຄະນະ

4. ທ່ານ ນາງ ບຸນເຖິງ ສຸກຂະຫວັດ ຮອງຫົວໜ້າພະແນກນິຕິກຳ, ກົມພາສີ ເປັນຮອງຄະນະ

5. ທ່ານ ນາງ ທັດສະນະລີ ສະພັງທອງ ຮັກສາການຫົວໜ້າພະແນກ ກົມປູກຝັງ ຄະນະ

6. ທ່ານ ສູນທອນ ຈັນທະເດດ ຫົວໜ້າສູນ ກົມມາດຕະຖານ ແລະ ວັດແທກ ຄະນະ

7. ທ່ານ ອຸດອນ ອາລຸນສະຫວັດ ຮອງຫົວໜ້າພະແນກ, ສຄອຊ ຄະນະ

8. ທ່ານ ວອນນະເດດ ມະນີລາ ຮອງພະແນກເສດຖະກິດບໍ່ແຮ່ ກົມຄຸ້ມຄອງບໍ່ແຮ່ ຄະນະ

9. ທ່ານ ນາງ ອຳໄພວັນ ພົນທະສິນບັດ ຫົວໜ້າຂະແໜງກົມລ້ຽງສັດ ແລະ ການປະມົງ ຄະນະ

10. ທ່ານ ນາງ ວາດສະໜາ ຈັນທະວົງ ຫົວໜ້າຂະແໜງກົມລ້ຽງສັດ ແລະ ການປະມົງ ຄະນະ

11. ທ່ານ ຈັນທະຄານ ໄຊຍະສອນ ຮອງຫົວໜ້າຂະແໜງກົມລ້ຽງສັດ ແລະ ການປະມົງ ຄະນະ

12. ທ່ານ ບຸດສະກອນ ຫຼວງລາດ ຮອງຫົວໜ້າສູນ ກົມມາດຕະຖານ ແລະ ວັດແທກ ຄະນະ

13. ທ່ານ ວົງເດືອນ ແພງລັດຕະນະ ວິຊາການ, ກົມພາສີ ຄະນະ

14. ທ່ານ ສີສະເກດ ຊຸນທຳ ວິຊາການ, ກົມອາຫານ ແລະ ຢາ ຄະນະ

15. ທ່ານ ນາງ ພູສິມພອນ ສີຫອມວົງ ວິຊາການ, ກົມການນຳເຂົ້າ ແລະ ສົ່ງອອກ ຄະນະ

16. ທ່ານ ນາງ ວັນນິດາ ວິທາເທບ, ວິຊາການ, ກົມການນຳເຂົ້າ ແລະ ສົ່ງອອກ ຄະນະ

17. ທ່ານ ໂສພາ ຄຳອິນ ວິຊາການ ກົມປູກຝັງ
ຄະນະ

18. ທ່ານ ວັນນິຖາ ກົມມະນີວົງ ວິຊາການ ກົມຂົນສົ່ງ ຄະນະ

19. ທ່ານ ນາງ ດາລາວອນ ວັນສາວົງຄາ ວິຊາການ, ສຄອຊ ຄະນະ

20. ທ່ານ ຜູ້ຕາງໜ້າຈາກສະມາຄົມຜູ້ຈັດສົ່ງສິນຄ້າລະຫວ່າງປະເທດ ຄະນະ

21. ບັນດາທ່ານຫົວໜ້າຄະນະຄຸ້ມຄອງດ່ານຊາຍແດນທີ່ດຳເນີນການສຶກສາ TRS ຄະນະ

**ມາດຕາ 3.** ໜ້າທີ່ ແລະ ຄວາມຮັບຜິດຊອບ

ຄະນະດັ່ງກ່າວມີໜ້າທີ່ຮັບຜິດຊອບ ດັ່ງນີ້:

- ກຳນົດຫຼັກການ, ວິທີການ, ຂອບເຂດ ແລະ ເວລາໃນການສຶກສາ TRS;
- ສ້າງແຜນດຳເນີນງານ ແລະ ແບ່ງຄວາມຮັບຜິດຊອບຕາມການເຫັນດີຂອງຄະນະຊີ້ນຳ;
- ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃຫ້ເປັນເຈົ້າການເຂົ້າຮ່ວມການສຶກສາ TRS;
- ດຳເນີນການສຶກສາເວລາໃນການກວດກາເອກະສານ ແລະ ກວດປ່ອຍສິນຄ້າໃຫ້ສຳເລັດໃນເດືອນ ທັນວາ 2020;
- ລາຍງານຜົນການສຶກສາ TRS ໃຫ້ຄະນະອຳນວຍຄວາມສະດວກທາງດ້ານການຄ້າຮັບຊາບ ພ້ອມທັງເຜີຍແຜ່ໃຫ້ສັງຄົມຮັບຊາບຢ່າງກ້ວາງຂວາງ;
- ເຜີຍແຜ່ ແລະ ນຳສົ່ງບົດລາຍງານໃຫ້ ກອງເລຂາ ອາຊຽນ ຕາມກຳນົດ.

**ມາດຕາ 4.** ສຳລັບງົບປະມານ ຮັບໃຊ້ການເຄື່ອນໄຫວວຽກງານຂອງຄະນະດັ່ງກ່າວ ແມ່ນນຳໃຊ້ເງິນໂຄງການສົ່ງເສີມຄວາມສາມາດໃນການແຂ່ງຂັນ ແລະ ການຄ້າ ຂອງ ສປປ ລາວ ລະຫັດເລກທີ່ B1CI003 ທີ່ໄດ້ຮັບຮອງຈາກຄະນະຊີ້ນຳແຜນງານໂຄງການ ແລະ ທະນາຄານໂລກ ຄັ້ງວັນທີ 12 ທັນວາ 2019.

**ມາດຕາ 5.** ມອບໃຫ້ບັນດາ ທ່ານ ທີ່ຖືກແຕ່ງຕັ້ງ ແລະ ພາກສ່ວນທີ່ ກ່ຽວຂ້ອງຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 6.** ຂໍ້ຕົກລົງສະບັບນີ້ ມີຜົນບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ
(ຫົວໜ້າກອງເລຂາ ຄອຄ)

ນ.ເຂັມມະນີ ພົນເສນາ